# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດທີ 11 ມິຖຸນາ 2023 (06-11-2023)

## ໂມເຊແລະໂຢຊວຍ

*ໃຜຄືຜູ້ມີອິດທິພົນອັນໃຫຍ່ຫຼວງເໜືອທ່ານເມື່ອຕອນເຕີບໃຫຍ່ຂຶ້ນ?*

**ຈຸດສຳຄັນໃນບົດຮຽນ:** ຈົ່ງໃຫ້ຄຳປຶກສາແລະສ້າງສາວົກແກ່ຜູ້ທີ່ມາຫຼັງຈາກທ່ານ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ໃຜມີອິດທິພົນເໜືອທ່ານໃນຂນະທີ່ທ່ານເຕີບໃຫຍ່ຂຶ້ນ? ສຳລັບຂ້າພະເຈົ້າແລ້ວແມ່ນທ່ານ ວອລລີ (Wally), ຊຶ່ງແມ່ນສິດຍາພິບານຊາວໜຸ່ມຂອງຂ້າພະເຈົ້າ, ແຕ່ລາວໄດ້ກາຍມາເປັນຫຼາຍກວ່າສິດຍາພິບານຊາວໜຸ່ມຕໍ່ຂ້າພະເຈົ້າ. ທ່ານ ວອລລີ ໄດ້ເປັນຜູ້ໃຫ້ຄຳປຶກສາແລະເພື່ອນຕລອດຊີວິດຂອງຂ້າພະເຈົ້າ. ຂ້າພະເຈົ້າເປັນຄົນທີ່ຂ້າພະເຈົ້າເປັນ, ປັດຈຸບັນນີ້ແມ່ນດ້ວຍຜົນກະທົບທີ່ທ່ານ ວອລລີ ມີຕໍ່ຊີວິດຂອງຂ້າພະເຈົ້າ. ຂອງຂວັນທີ່ຍິ່ງໃຫຍ່ທີ່ຂ້າພະເຈົ້າໄດ້ຮັບຈາກລາວແມ່ນເວລາ-ເວລາທີ່ຂ້າພະເຈົ້າໄດ້ໃຊ້ຮ່ວມກັບລາວໃນຂນະທີ່ຂ້າພະເຈົ້າໄດ້ເຮັດໃຫ້ຄວາມເຊື່ອເຕີບໃຫຍ່ແລະທັສນະກ່ຽວກັບຊີວິດຂອງຂ້າພະເຈົ້າ.

ການໃຊ້ເວລາຮ່ວມກັນຂອງພວກເຮົາບໍ່ໄດ້ຢຸດຢູ່ທີ່ການຈົບການສຶກສາທີ່ມະຫາວິທຍາລັຍ ຫຼື ການເລີ້ມຕົ້ນພັນທະກິຈຂອງຂ້າພະເຈົ້າ. ທ່ານ ວອລລີ ກາຍມາເປັນບຸກຄົນທີ່ ໄປຫາ(go-to guy) ຂອງຂ້າພະເຈົ້າເມື່ອໃດທີ່ຂ້າພະເຈົ້າມີຄຳຖາມກ່ຽວກັບພັນທະກິຈ, ການສົມຣົດ, ແລະກ່ຽວກັບຊີວິດ. ລາວຕື່ນເຕັ້ນຢູ່ສເມີເມື່ອໄດ້ຍິນຈາກຂ້າພະເຈົ້າ. ສອງສາມປີກ່ອນທີ່ລາວເສັຽຊີວິດ, ວອລລີ ໄດ້ມາທີ່ ຣັສ ເນວາດາແລະໄດ້ໃຊ້ເວລາ 5 ອາທິດໃຫ້ຄຳປຶກສາແກ່ຂ້າພະເຈົ້າຢູ່ທີ່ຄຣິສຕະຈັກທີ່ຂ້າພະເຈົ້າເປັນສິດຍາພິບານຢູ່ນັ້ນ. ໃນລະຫວ່າງຫ້າອາທິດນັ້ນ, ພວກເຮົາໄດ້ສ້າງຄວາມຊົງຈຳໂດຍການຂັບຣົດຈີບ(Jeep)ຂອງຂ້າພະເຈົ້າຕະລຸຍພູຜາໃນພາກຕະເວັນອອກສຽງເໜືອຂອງຣັສເນວາດາ. ໃນຖານະທີ່ເປັນເພື່ອນຮ່ວມຊີວິດ, ວອລລີ ໄດ້ຖັ້ມເທປະສົບການແລະສະຕິປັນຍາຂອງລາວໃສ່ໃນຊີວິດຂອງຂ້າພະເຈົ້າ. **ຂ້າພະເຈົ້າເປັນຜະລິດພັນຂອງການໃຫ້ຄຳປຶກສາຂອງລາວ.**

ເຊັ່ນດຽວກັນ, ພຣະເຈົ້າໄດ້ຊົງໃຊ້ໂມເຊເພື່ອໃຫ້ຄຳປຶກສາແກ່ໂຢຊວຍ ຊຶ່ງໄດ້ກັບກາຍມາເປັນຜູ້ນຳທີ່ເຂັ້ມແຂງພາຍໃຕ້ການຊົງນຳພາຂອງພຣະເຈົ້າ, ແລະໄດ້ເປັນຜະລິດພັນຂອງການໃຫ້ຄຳປຶກສາຂອງໂມເຊ.

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

## ການສຶກສາພຣະຄັມພີ

### 1. ຈົດບັນຊີ 27:12-17

*12ພຣະຜູ້ເປັນເຈົ້າຊົງກ່າວກັບໂມເຊວ່າ, "ຈົ່ງເດີນທາງໄປພູ ອາບາຣິມ ເພື່ອໄປເບິ່ງແຜ່ນດິນທີ່ເຮົາຈະມອບໃຫ້ພວກອິສຣາເອນ. 13–*
*14ເມື່ອເຈົ້າໄດ້ເຫັນແລ້ວ ເຈົ້າຈະຕາຍເໝືອນດັ່ງ ອາໂຣນ ອ້າຍຂອງເຈົ້າ ຍ້ອນວ່າແຕ່ກ່ອນເຈົ້າທັງສອງໄດ້ລະເມີດຄຳສັ່ງຂອງເຮົາຢູ່-*
*ໃນຖິ່ນແຫ້ງແລ້ງກັນດານ ຊິນ ຄືໃນຄາວຊຸມນຸມຊົນທຸກຄົນຮ້ອງທຸກຕໍ່ສູ້ເຮົາທີ່ ເມຣີບາ ເຈົ້າໄດ້ປະຕິເສດບໍ່ຮັບຮູ້ອຳນາດອັນສັກສິດຂອງ*
*ເຮົາຕໍ່ໜ້າພວກເຂົາ" (ເມຣີບາ ເປັນຊື່ບໍ່ນໍ້າທີ່ເມືອງ ກາເດັດ ໃນຖິ່ນແຫ້ງແລ້ງກັນດານ ຊິນ). 15–16ແລ້ວໂມເຊກໍໄດ້ອ້ອນວອນພຣະຜູ້-*
*ເປັນເຈົ້າວ່າ "ໂອຂ້າແດ່ພຣະຜູ້ເປັນເຈົ້າ ພຣະເຈົ້າຜູ້ຊົງເປັນບໍ່ເກີດແຫ່ງຊີວິດຂອງທຸກຄົນ ພຣະອົງຊົງເປັນຜູ້ແຕ່ງຕັ້ງ ຂ້ານ້ອຍອ້ອນ-*
*ວອນຂໍຕໍ່ພຣະອົງ ຂໍຊົງໂຜດແຕ່ງຕັ້ງໃຫ້ມີຜູ້ນຳປະຊາຊົນເຫລົ່ານີ້. 17ແລະທັງເປັນຜູ້ບັງຄັບບັນຊາພວກເຂົາອອກສູ່ສະໜາມຮົບເພື່ອວ່າ*
*ຊຸມນຸມຊົນຂອງພຣະອົງນີ້ຈະບໍ່ເປັນເໝືອນແກະທີ່ຂາດຜູ້ລ້ຽງ."*

ໃນຊ່ວງການສຶກສານີ້, ພຣະເຈົ້າໄດ້ຊົງປະກາດເຖິງຄວາມຕາຍທີ່ໃກ້ຈະມາເຖິງໂມເຊ ແລະໂມເຊກໍໄດ້ຮັບຄວາມເຫັນກ່ຽວກັບອະນາຄົດທີ່ລໍຖ້າຊົນຊາດອິສຣາເອນ. ພຣະເຈົ້າໄດ້ຊົງແນະນຳລາວໃຫ້ຂຶ້ນໄປເທິງຍອດພູເຂົາເພື່ອຫຼຽວເບິ່ງດິນແດນທີ່ຊົນຊາດຈະເຂົ້າໄປນັ້ນ. ສະຖານທີ່ແຫ່ງນີ້ແມ່ນພື້ນທີ່ໃນອະນາຄົດຊຶ່ງໄດ້ຈັດຕຽມໄວ້ສຳລັບຊົນຊາດອິສຣາເອນ. ໃນເວລາດຽວກັນນີ້, ໂມເຊຍັງໄດ້ຮັບຈາກພຣະເຈົ້າການທົບທວນຄວາມຈຳຂອງສະຖານະການທີ່ໜ້າເສັຽດາຍໃນອະດີດຂອງລາວຄື: <u>ຄວາມຫຼົ້ມເຫຼວໃນການເຊື່ອຟັງພຣະເຈົ້າຂອງລາວ</u>. ໂດຍເຫດທີ່ບໍ່ເຊື່ອຟັງນັ້ນ, ໂມເຊໄດ້ຖືກຫ້າມບໍ່ໃຫ້ເຂົ້າໄປໃນດິນແດນແຫ່ງພັນທະສັນຍາ (ຈບຊ 20:2-13). ເຖິງແມ່ນວ່າຈະຮູ້ສຶກເສັຽໃຈທີ່ຄວາມຊົງຈຳດັ່ງກ່າວອາດໄດ້ເກີດຂຶ້ນ, ແຕ່ໂມເຊກໍໄດ້ເອົາໃຈສຸມໃສ່ທີ່ອະນາຄົດຂອງຊົນຊາດອິສຣາເອນ. ລາວໄດ້ຮັບຮູ້ຢ່າງຈິງຈັງກ່ຽວກັບການເອົາແຕ່ໃຈ(ຫົວດື້)ຂອງປະຊາຊົນ ແລະຄວາມຕ້ອງການຂອງພວກເຂົາເຈົ້າສຳລັບຜູ້ນຳທີ່ເຂັ້ມແຂງໃນອະນາຄົດ. <u>ແທນທີ່ຈະຈົ່ມຕໍ່ວ່າຕໍ່ຂານໃຫ້ພຣະເຈົ້າວ່າພຣະອົງບໍ່ຊົງອະນຸຍາດໃຫ້ລາວເຂົ້າໄປໃນດິນແດນແຫ່ງພັນທະສັນຍາ</u>, <u>ໂມເຊໄດ້ເວົ້າກັບພຣະເຈົ້າກ່ຽວກັບຜູ້ນຳໃນອະນາຄົດຂອງຊົນຊາດອິສຣາເອນ</u>.

*ແມ່ນຫຍັງທີ່ອາດເປັນເຫດປ້ອງກັນພວກເຮົາຍື່ນກະບອງ(ໄຟ)ໃຫ້ແກ່ຊົນຊາດລຸ່ນຫຼັງຕໍ່ໄປ?*

ນີ້ແມ່ນເຄື່ອງໝາຍຂອງຜູ້ນຳທີ່ຍິ່ງໃຫຍ່: <u>**ເປັນຫ່ວງເປັນໄຍຄົນອື່ນຫຼາຍກວ່າເປັນຫ່ວງເປັນໄຍຕົນເອງ**</u>. ນັ້ນແມ່ນເຄື່ອງໝາຍຂອງ<u>ຜູ້ໃຫ້ຄຳປຶກສາ</u>ທີ່ຍິ່ງໃຫຍ່ເຊັ່ນດຽວກັນ. ດັ່ງດຽວກັນກັບໂມເຊ, ບັນດາຜູ້ໃຫ້ຄຳປຶກສາທັງຫຼາຍຈຳເປັນຕ້ອງ<u>ເຂົ້າໃຈ</u>ຄວາມສັ້ນຂອງຊີວິດແລະຈຳເປັນຕ້ອງ<u>ສົ່ງຕໍ່</u>ສະຕິປັນຍາໃຫ້ແກ່ຜູ້ອື່ນ. ນອກຈາກນີ້ຍັງຈະຕ້ອງມີຄວາມປາຖນາທີ່ຈະປ່ອຍຖິ້ມຄວາມຕ້ອງການແລະຄວາມມັກສ່ວນຕົວເພື່ອຊ່ອຍໃຫ້ຜູ້ອື່ນເຕີບໃຫຍ່ແລະພັດທະນາ. ໂມເຊບໍ່ໄດ້ສັ່ງການໃຫ້ພຣະເຈົ້າວ່າບັນດາຜູ້ນຳໃນອະນາຄົດສົມຄວນແມ່ນຜູ້ໃດ. ໂມເຊໄດ້ທຳໜ້າທີ່ຂອງຕົນຢ່າງຮອບຄອບໃນການໃຫ້ຄຳປຶກສາແກ່ຊາຍໜຸ່ມ ໂຢຊ່ວຍ. ທີ່ຈິງແລ້ວ, ໂຢຊ່ວຍໄດ້ຮັບໃຊ້ຢູ່ພາຍໃຕ້ການປົກຄອງຂອງໂມເຊໃນສມັຍກ່ອນໃນລະຍະເວລາຂອງພວກເຂົາເຈົ້າໃນຖິ່ນແຫ້ງແລ້ງທຸລະກັນດານ (ອພຍ 17:8-14). ຢ່າງໃດກໍຕາມ, ໂມເຊໄດ້ຮັບຮູ້ວ່າມັນບໍ່ແມ່ນໜ້າທີ່ຂອງລາວທີ່ຈະແຕ່ງຕັ້ງ ໂຢຊ່ວຍ ໃຫ້ເປັນຜູ້ສືບທອດຕາມຈິດໃຈຂອງລາວ. <u>ລາວສົມຄວນທີ່ຈະປ່ອຍສິ່ງນັ້ນໃຫ້ເປັນໜ້າທີ່(ພຣະດຳຣັສຄຳສັ່ງ)ຂອງພຣະເຈົ້າ</u>.

ໂມເຊໄດ້ເວົ້າກັບພຣະເຈົ້າໂດຍກົງກ່ຽວກັບໃຜຜູ້ໜຶ່ງທີ່ຈະມາຮັບໜ້າທີ່ການເປັນຜູ້ນຳ. ສ່ວນຫຼາຍ, ອາດຈະບໍ່ເປັນກໍລະນີກັບພວກເຮົາ. ພວກເຮົາຈະບໍ່ພົບຕົນເອງໃນຕຳແໜ່ງທີ່ຈະທົດແທນຕົວເຮົາເອງ, ແຕ່ນັ້ນບໍ່ແມ່ນຂໍ້ແກ້ຕົວທີ່ພວກເຮົາຈະເວັ້ນຈາກການໃຫ້ຄຳປຶກສາ, ໃຫ້ຄຳໜຸນໃຈ, ແລະການລົງທຶນເວລາກັບໃຜຜູ້ໜຶ່ງຊຶ່ງພວກເຮົາກຳລັງໃຫ້ຄຳປຶກສາຢູ່. ການໃຫ້ຄຳປຶກສາຂອງພວກເຮົາສົມຄວນແນ່ນອນຈະຕ້ອງປະກອບດ້ວຍ<u>ການສ້າງການເຕີບໃຫຍ່ຝ່າຍຈິດວິນຍານ</u>-ຊ່ອຍໃຫ້ພວກເຂົາເຈົ້າເຕີບໃຫຍ່ໃນຄວາມສຳພັນກັບອົງພຣະຄຣິດ. ໂມເຊໄດ້ຫຼິງເຫັນເຖິງຄວາມຈຳເປັນແລະໄດ້ທູນຂໍຕໍ່ອົງພຣະເຈົ້າໃຫ້ຊົງແຕ່ງຕັ້ງຜູ້ນຳຄົນໃໝ່ໃຫ້ປົກຄອງຊາດເພື່ອລ້ຽງດູປະຊາຊົນ. ຄຳບັນລະຍາຍຂອງໂມເຊກ່ຽວກັບ <u>ຝູງແກະທີ່ບໍ່ມີຜູ້ລ້ຽງ</u>ແມ່ນເໝາະສົມໃນການພິຈາລະນາປວັດສາດຂອງຄວາມເອົາແຕ່ໃຈ(ຫົວດື້)ຂອງຊາວອິສຣາເອນ. <u>**ຜູ້ນຳຄົນໃໝ່ນີ້ຈະມີຄວາມຮັບຜິດຊອບໃນການນຳພາປະເທດຊາດໃນສົງຄາມແລະໃນສັນຕິສຸກ, ໃນເວລາທີ່ທີ່ຂັດສົນແລະໃນເວລາທີ່ອຸດົມສົມບູນ**</u>.

## 2. <u>ຈົດບັນຊີ 27:18-20</u>

*[18]ພຣະຜູ້ເປັນເຈົ້າຈຶ່ງກ່າວຕໍ່ໂມເຊວ່າ, "ຈົ່ງໄປເອົາ ໂຢຊວຍ ລູກຊາຍຂອງທ່ານ ນູນ ຊຶ່ງເປັນຊາຍທີ່ມີຄວາມສາມາດແລະມີພຣະວິນ-*
*ຍານ ແລ້ວໃຫ້ວາງມືເທິງຫົວເພິ່ນ. [19]ໃຫ້ເອົາລາວຢືນຢູ່ຕໍ່ໜ້າປະໂລຫິດ ເອເລອາຊາ ແລະຊຸມນຸມຊົນທັງໝົດແລ້ວໃຫ້ເຈົ້າປະກາດແຕ່ງ*
*ຕັ້ງໃຫ້ລາວເປັນຜູ້ສືບແທນເຈົ້າຕໍ່ໜ້າຄົນເຫລົ່ານີ້. [20]ເພື່ອວ່າໃຫ້ຊຸມນຸມຊົນອິສຣາເອນຟັງຄວາມເພິ່ນ ຂໍໃຫ້ເຈົ້າມອບສິດແລະອຳນາດ-*
*ບາງຢ່າງຂອງເຈົ້າໃຫ້ໂຢຊວຍ.*

ພວກເຮົາອາດຈະເຫັນດີເຫັນພ້ອມວ່າ ໂຢຊວຍເປັນຕົວເລືອກໂດຍທັມມະຊາດສຳລັບຕົວແທນຂອງໂມເຊ. ລາວໄດ້ເປັນຜູ້ຮັບໃຊ້ຂອງໂມເຊນັບຕັ້ງແຕ່ສມັຍຂອງເຫດການອົບພະຍົບ. ໂຢຊວຍໄດ້ຮັບໃຊ້ໃນຕຳແໜ່ງນາຍພົນຂອງຊາວອິສຣາເອນໃນສົງຄາມກັບຊາວ ອາ

ມາເລັກ (ອພຍ 17:8-9). ລາວໄດ້ຢູ່ຮຽງຂ້າງໂມເຊໃນຂນະທີ່ໂມເຊໄດ້ຮັບແຜ່ນຫີນ (tablets) ພຣະບັນຍັດເທິງພູເຂົາຊີນາຍ (ອພຍ 24:12-13). ລາວໄດ້ຮັບໃຊ້ໃນຕຳແໜ່ງຜູ້ນຶ່ງໃນຈຳນວນນັກສືບ 12 ຄົນຊຶ່ງໄດ້ເຂົ້າໄປໃນດິນແດນແຫ່ງພຣະສັນຍາເພື່ອຈະໄດ້ລາຍງານສະພາບການກ່ຽວກັບດິນແດນແຫ່ງນັ້ນ (ຈບຊ 13-14). ໂຢຊວຍ ແລະ ຄາເລັບ ເປັນນັກສືບພຽງສອງຄົນເທົ່ານັ້ນທີ່ໄດ້ສະແດງຄວາມໄວ້ວາງໃຈໃນພຣະອຳນາດຂອງພຣະເຈົ້າທີ່ຈະໄດ້ຊົງປະທານຊັຍຊນະແກ່ຊົນຊາດອິສຣາເອນ.

ໃນຂນະທີ່ພວກເຮົາອາດຈະເຊື່ອວ່າ ໂຢຊວຍ ສະແດງອອກໃຫ້ເຫັນເຖິງຄຸນສົມບັດທຸກຢ່າງສຳລັບການເປັນຕົວແທນຂອງໂມເຊ, ໃນລະຍະຍາວຄວາມຄິດເຫັນຂອງພວກເຮົາມີຄວາມສຳຄັນພຽງເລັກນ້ອຍເທົ່ານັ້ນ. ມັນແມ່ນການຊົງປະເມີນຜົນຂອງພຣະເຈົ້າທີ່ເປັນສິ່ງສຳຄັນ. ສຳລັບພຣະເຈົ້າແລ້ວ, ສິ່ງທີ່ສຳຄັນກ່ຽວກັບ ໂຢຊວຍແມ່ນ: "ຜູ້ຊາຍທີ່ມີພຣະວິນຍານບໍຣິສຸດຢູ່ໃນລາວ." ເວົ້າອີກຢ່າງນຶ່ງ, ໂຢຊວຍມີຄວາມມຸ້ງໝັ້ນຢ່າງເລິກເຊິ່ງທີ່ຈະຕິດຕາມພຣະເຈົ້າແລະຕິດຕາມການຊົງຊີ້ນຳທິດທາງຂອງພຣະອົງ. ລາວເປັນຄົນທີ່ເຕັມປ່ຽມດ້ວຍພຣະວິນຍານຂອງພຣະເຈົ້າ ແລະເປັນຄົນທີ່ເຊື່ອຟັງໃນການຊົງນຳພາຂອງພຣະວິນຍານບໍຣິສຸດ. ໂຢຊວຍອາດຈະເປັນຜູ້ທີ່ໂມເຊໄດ້ເລືອກໄວ້, ແຕ່ສຳຄັນຍິ່ງໄປກວ່ານັ້ນລາວເປັນຄົນທີ່ພຣະເຈົ້າໄດ້ຊົງເລືອກໃຫ້ເປັນຕົວແທນຂອງໂມເຊ.

ຂໍ້ທີ 19-20, ເລີ່ມຕົ້ນດ້ວຍການປ່ຽນແປງຂອງການນຳພາ. ໂມເຊໄດ້ຖືກສັ່ງໃຫ້ເປີດເຜີຍການຊົງຮຽກເອີ້ນຂອງພຣະເຈົ້າກ່ຽວກັບຊີວິດຂອງໂຢຊວຍໃຫ້ແກ່ປະຊາຊົນໄດ້ຍິນໄດ້ຟັງ. ມາເຖິງຈຸດນີ້, ໂມເຊເປັນຜູ້ນຳຄົນດຽວເທົ່ານັ້ນທີ່ປະຊາຊົນໄດ້ຮູ້ຈັກ. ດ້ວຍເຫດນີ້ເອງ, ມັນເປັນການສຳຄັນທີ່ສຸດສຳລັບ ໂມເຊທີ່ຈະຮັບຮອງ ໂຢຊວຍແລະນຳພາປະຊາຊົນໃຫ້ເຫັນພຣະຫັດ (ມື) ຂອງພຣະເຈົ້າໃນການປ່ຽນແປງການນຳພານີ້. ຍິ່ງສຳຄັນໄປກວ່ານັ້ນແມ່ນການຖ່າຍທອດອຳນາດໃຫ້ແກ່ໂຢຊວຍ. ປະຊາຊົນສົມຄວນທີ່ຈະເຂົ້າໃຈວ່າພວກເຂົາເຈົ້າຈຳເປັນຕ້ອງຕິດຕາມການນຳພາຂອງໂຢຊວຍ ໃນທາງດຽວກັນກັບທີ່ພວກເຂົາເຈົ້າຕິດຕາມໂມເຊ.

ໂມເຊໄດ້ຖືກສັ່ງໃຫ້ມອບໜ້າທີ່ແກ່ໂຢຊວຍຕໍ່ໜ້າປະຊາຊົນ. ພາກສ່ວນນຶ່ງຂອງການແຕ່ງຕັ້ງສາທາລະນະນັ້ນແມ່ນການວາງມື. ນີ້ແມ່ນການປະຕິບັດທີ່ສຳຄັນໃນການສົ່ງຕໍ່ພຣະພອນໄປສູ່ຄົນອື່ນ. ຕົວຢ່າງຂອງສິ່ງເຫຼົ່ານີ້ໄດ້ພົບເຫັນໃນພຣະຄັມພີພຣະສັນຍາເດີມແລະພຣະສັນຍາໃຫມ່. ໃນກໍລະນີຂອງໂຢຊວຍ, ການວາງມືແມ່ນການຮັບຮູ້ທາງສາທາລະນະ ສະແດງໃຫ້ເຫັນວ່າໂຢຊ່ວຍມີຄຸນສົມບັດທີ່ດີໃນການເປັນຜູ້ນຳພາຍໃນຫຼາຍປີໃນອະນາຄົດ. ປະຊາຊົນຈະມອງເຫັນວ່ານີ້ແມ່ນການຊົງຢືນຢັນຈາກພຣະເຈົ້າວ່າ: **ພຣະເຈົ້າໄດ້ຊົງສະຖິດຢູ່ນຳໂຢຊວຍ**.

*ມີວິທີທາງໃດແດ່ທີ່ຄົນອື່ນໆໄດ້ຊ່ວຍເຫຼືອທ່ານຕິດຕາມອົງພຣະຄຣິດ?*

## 3. ຈົດບັນຊີ 27:21-23

*[21] ໂຢຊວຍຈະປຶກສາກັບປະໂລຫິດ ເອເລອາຊາ ຜູ້ທີ່ຮູ້ຈັກນໍ້າພຣະທັຍຂອງເຮົາໂດຍ ອູຣິມ. ໂດຍວິທີນີ້ເອເລອາຊາ ຈະແນະນຳໂຢ-ຊວຍແລະຊຸມນຸມຊົນອິສຣາເອນທັງໝົດຕາມໜ້າທີ່ການຂອງພວກເຂົາ." [22] ແລ້ວໂມເຊໄດ້ປະຕິບັດຕາມຄຳສັ່ງຂອງພຣະຜູ້ເປັນເຈົ້າ. ເພິ່ນໄດ້ໃຫ້ ໂຢຊວຍ ຢືນຂຶ້ນຢູ່ຕໍ່ໜ້າປະໂລຫິດ. [23] ເອເລອາຊາ ແລະຊຸມນຸມຊົນທັງໝົດວາງມືເທິງຫົວຂອງໂຢຊວຍ ແລະປະກາດ-ແຕ່ງຕັ້ງໃຫ້ເປັນຜູ້ສືບແທນຕົນ.*

ໃນຂນະທີ່ພຣະເຈົ້າຊົງສືບຕໍ່ຄຳແນະນຳຂອງພຣະອົງຕໍ່ໂມເຊ, ພຣະອົງໄດ້ຊົງຮວມເອົາລາຍລະອຽດກ່ຽວກັບພິທີແຕ່ງຕັ້ງມອບໝາຍສຳລັບໂຢຊວຍ. ສິ່ງນີ້ຈະກ່ຽວຂ້ອງກັບການບໍລິການຮັບໃຊ້ຂອງມະຫາປະໂລຫິດ ເອເລອາຊາ. ໃນເມື່ອ ອາໂຣນ ໄດ້ເສັຽຊີວິດໄປແລ້ວ, ລູກຊາຍຂອງລາວຊື່ ເອເລອາຊາ ໄດ້ສືບຕໍ່ໃນຕຳແໜ່ງໜ້າທີ່ມະຫາປະໂລຫິດແທນພໍ່ຂອງລາວ (ຈບຊ 20:22-29). ມະຫາປະໂລຫິດມີໜ້າທີ່**ເປັນຕົວແທນຂອງພຣະເຈົ້າຕໍ່ໜ້າປະຊາຊົນ ແລະ ເປັນຕົວແທນຂອງປະຊາຊົນຕໍ່ໜ້າພຣະເຈົ້າ**.

*ເປັນຫຍັງທ່ານຈຶ່ງຄິດວ່າການຢືນຢັນຂອງບຸກຄົນ(ໃຜຜູ້ນຶ່ງ)ຕໍ່ສາທາລະນະເປັນສິ່ງສຳຄັນ?*

ເອເລອາຊາຈະມີບົດບາດອີກຢ່າງນຶ່ງເໝືອນກັນໃນການນຳພາຂອງໂຢຊວຍ. ລາວຈະໃຊ້ແກ້ວມະນີ(stones)ສອງຢ່າງຄື: ອູຣິມ(Urim) ແປວ່າແສງສວ່າງ, ໄຟ (lights, fires) ແລະທູມມີມ (Thummim) ແປວ່າສົມບູນ, ຄວາມຈິງ (perfect, truth) ໃຫ້ຊ່ອຍໂຢຊວຍໄດ້

ກຳນົດພຣະປະສົງຂອງອົງພຣະເຈົ້າ. ສອງສິ່ງນີ້ໄດ້ຖືກຮັກສາໄວ້ໃນຖົງນ້ອຍໆທີ່ຕິດຢູ່ກັບແຜ່ນປົກໜ້າເອິກ (ທັບຊວງ) ຂອງມະຫາປະໂລຫິດ. ທັບຊວງນີ້ມີຄວາມໝາຍວ່າ: "**ທັບຊວງແຫ່ງການພິພາກສາ**" (ອພຍ 28:15-30). ອູຣິມ ແລະ ທູມມີມ ມີລັກສະນະແນວໃດ ແລະການໃຊ້ສອງສິ່ງນີ້ເພື່ອເຫດໃດນັ້ນບໍ່ເປັນການແຈ່ມແຈ້ງ, ແຕ່ສິ່ງເຫຼົ່ານີ້ກ່ຽວຂ້ອງກັບການຕັດສິນໃຈແລະການສແວງຫານ້ຳພຣະທັຍຂອງພຣະເຈົ້າ. ສິ່ງເຫຼົ່ານີ້ອາດຈະຖືກໃຊ້ຄືກັນກັບ<u>ການຈັບສລາກ</u>ຊຶ່ງມີໃຫ້ເຫັນຢູ່ທົ່ວໄປໃນພຣະຄັມພີ.

ການບັນທຶກໃນພຣະຄັມພີໃຫ້ລາຍລະອຽດເລັກນ້ອຍກ່ຽວກັບລະຍະເວລາລະຫວ່າງພິທີມອບໝາຍໜ້າທີ່ ແລະການເສັຽຊີວິດຂອງໂມເຊ. ບໍ່ວ່າເວລາໃດທີ່ຍັງຢູ່ກັບໂມເຊ, ມັນເປັນໄປໄດ້ທີ່ ໂຢຊວຍໄດ້ຮັບຄວາມຮັບຜິດຊອບການນຳພາທີ່ເພີ້ມຂຶ້ນ. ລາວໄດ້ເບິ່ງໂມເຊນຳໜ້າເປັນເວລາຫຼາຍປີ, ແລະຕອນນີ້ໂຢຊວຍເລີ້ມແບ່ງປັນການນຳພາກັບໂມເຊ. ອີກບໍ່ດົນ, ໂມເຊກໍຈະຈາກໄປ ແລະ ໂຢຊວຍຈະຮັບໜ້າທີ່ເປັນຜູ້ນຳພາໃນຂ້າງໜ້າອີກຫຼາຍປີ. ຄຣິສຕະຈັກທຸກແຫ່ງແມ່ນມີພຽງແຕ່ລຸ້ນດຽວເທົ່ານັ້ນທີ່<u>ຫ່າງຈາກການສູນພັນ</u>(ສິ້ນສຸດໄປ) **ຖ້າ**ພວກເຮົາບໍ່ສ້າງຄົນອື່ນໃຫ້ເປັນສາວົກ, ໃຫ້ຄຳປຶກສາແກ່ພວກເຂົາເຈົ້າ, ແລະເດີນຄຽງຂ້າງພວກເຂົາເຈົ້າໃນການຮັບໃຊ້. ຈະເກີດຫຍັງຂຶ້ນເມື່ອພວກເຮົາຈາກໄປ(ຕາຍ)? **ມັນເປັນປະສົບການທີ່ໜ້າຊື່ນຊົມຍິນດີທີ່ຈະໃຫ້ຄຳແນະນຳປຶກສາ ແລະສ້າງສາວົກແກ່ບັນດາຜູ້ທີ່ມາຫຼັງຈາກເຮົາ. <u>ດັ່ງນັ້ນຂໍໃຫ້ເຮົາພາກັນມາໃຊ້ເວລາອັນມີຄ່າຂອງພວກເຮົາເພື່ອເຮັດສິ່ງນັ້ນເຖີດ</u>!**

*ແມ່ນຫຍັງທີ່ພວກເຮົາສາມາດຮຽນຮູ້ຈາກຄວາມສຳພັນລະຫວ່າງໂມເຊແລະໂຢຊວຍ?*

## ນຳໃຊ້ໃນຊີວິດ:

ຈົ່ງໃຫ້ຄຳປຶກສາແລະສ້າງສາວົກແກ່ຜູ້ທີ່ມາຫຼັງຈາກທ່ານ. ທ່ານຈະເຮັດແນວໃດເພື່ອດຳເນີນຊີວິດໃນຄວາມຈິງນີ້? ຈົ່ງເລືອກນຶ່ງໃນການນຳໃຊ້ຕໍ່ລົງໄປນີ້:

- **ຈົ່ງສແວງຫາ.** ຈົ່ງອະທິຖານແລະສແວງຫາທິດທາງຂອງພຣະເຈົ້າກ່ຽວກັບຜູ້ໃດຜູ້ນຶ່ງ ຊຶ່ງທ່ານອາດຈະຊ່ວຍເຫຼືອແລະໃຫ້ກຳລັງໃຈແກ່ລາວ.
- **ຈົ່ງຢືນຢັນ.** ທຸກໆຄົນຕ້ອງການຄຳໜູນໃຈ. ຈົ່ງຂຽນຈົດໝາຍນ້ອຍເຖິງໃຜຜູ້ນຶ່ງທີ່ທ່ານເຫັນຊຶ່ງເລີ້ມຈະເຕີບໃຫຍ່ແລະຮັບໃຊ້ຄົນອື່ນຕາມຄວາມສາມາດບາງຢ່າງ. ຈົ່ງຂອບໃຈຄົນຜູ້ນີ້, ໜູນໃຈລາວແລະໃຫ້ຂໍ້ສເນີວ່າຈະຊ່ວຍລາວເມື່ອຈຳເປັນ.
- **ຈົ່ງຈັດຕັ້ງ.** ດ້ວຍບົດບາດອັນໃດກໍຕາມທີ່ທ່ານຈະປະຕິບັດໃນການຮັບໃຊ້ຂອງຄຣິສຕະຈັກແລະພຣະຣາຊອານາຈັກຂອງພຣະເຈົ້າ, ຈົ່ງຂຽນບັນຊີລາຍຊື່ຂອງສິ່ງທີ່ທ່ານປາຖນາສິ່ງຕໍ່ກ່ຽວກັບການຮັບໃຊ້ນັ້ນໃຫ້ແກ່ຜູ້ອື່ນເພື່ອດຳເນີນຕໍ່ໄປ. ຈົ່ງໃຊ້ບັນຊີລາຍຊື່ນັ້ນ, ເລີ້ມຕົ້ນການຝຶກອົບຮົມໃຜຜູ້ນຶ່ງໂດຍບໍ່ເປັນທາງການສຳລັບບົດບາດທີ່ຈະເປັນໄປໄດ້.

ພວກເຮົາສ່ວນຫຼາຍສາມາດເບິ່ງຄືນຫຼັງໄປຍັງ<u>ບຸກຄົນ</u>ເໝືອນດັ່ງທ່ານ ວອລລີ ຊຶ່ງໄດ້ມີບົດບາດທີ່ສຳຄັນໃນການພັດທະນາເສີມສ້າງຂອງພວກເຮົາ. ຫວັງຢ່າງຍິ່ງວ່າບຸກຄົນນັ້ນສາມາດມອງເຫັນການລົງທຶນບາງຢ່າງຂອງພວກເຂົາໃນພວກເຮົາໄດ້ຮັບການເກີດດອກອອກຜົນ. **<u>ຈົ່ງພາກັນມາລອງເບິ່ງໃຫ້ເປັນບຸກຄົນຜູ້ນັ້ນໃນຊີວິດຂອງຜູ້ໃດຜູ້ນຶ່ງ</u>!**

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ SSK**